ນອກນັ້ນ, ອາຊຽນຍັງອຸດົມສົມບູນໄປດ້ວຍຄວາມຫຼາກຫຼາຍດ້ານປະຫວັດສາດ, ວັດທະນະທຳ, ຮີດຄອງປະເພນີ ແລະ ແບບແຜນການດຳລົງຊີວິດອີກດ້ວຍ.





## ທີ່ມີການປົກປ້ອງຊັບສິນທາງປັນຍາທີ່ດີ:

ປະຊາຄົມທຸລະກິດຈະໄດ້ຮັບຜົນປະໂຫຍດຈາກຄວາມພະຍາຍາມຂອງອາຊຽນທີ່ນັບມື້ນັບເພີ່ມທະວີເພື່ອປົກປ້ອງຊັບສິນທາງປັນຍາໂດຍຜ່ານການອອກ ຫຼື ປັບປຸງນິຕິກຳ ດ້ານຊັບສິນທາງປັນຍາ ແລະ ເຮັດໃຫ້ກົດໝາຍວ່າດ້ວຍຊັບສິນທາງປັນຍາສັກສິດ, ໃນນັ້ນ ລວມທັງເຄື່ອງໝາຍການຄ້າ, ສິດທິບັດ, ລິຂະສິດ, ເຄື່ອງໝາຍດ້ານອຸດສາຫະກຳ ແລະ ອື່ນໆ.





## ທີ່ອຸດົມຮັ່ງມີທາງດ້ານຊັບພະຍາກອນທະມະຊາດ:

ອາຊຽນແມ່ນພາກພື້ນໜຶ່ງທີ່ ອຸດົມຮັ່ງມີທາງດ້ານຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດດ້ານນ້ຳມັນ ແລະ ແຫຼ່ງສະສົມແກັສ ແລະ ແຮ່ທາດຕ່າງໆ ແລະ ອື່ນໆ. ສິ່ງເລົ່ານັ້ນ, ສະໜອງກາລະໂອກາດອັນໃຫຍ່ຫຼວງໃຫ້ແກ່ອຸດສາຫະກຳ ທີ່ ກ່ຽວຂ້ອງ. ບັນດາສະມາຊິກ ອາຊຽນກໍລ້ວນແຕ່ເປັນປະເທດຜູ້ຜະລິດ ແລະ ຜູ້ສົ່ງອອກທີ່ໃຫຍ່ຫຼວງທາງດ້ານຢາງພາລາ ແລະ ຜົນຜະລິດຢາງພາລາ, ເຟີນີເຈີ ແລະ ຜະລິດຕະພັນຈາກໄມ້, ຜະລິດຕະພັນນ້ຳມັນປາມ, ຜະລິດຕະພັນໂອໄລໂອ, ຫີນ(ຄຳຂາວ), ຫີນທີ່ມີຄ່າສູງ, ໝາກໄມ້ເຂດຮ້ອນ, ເຂົ້າ, ນ້ຳມັນ ແລະ ແກັສທຳມະຊາດ.


**ຈັດພິມໂດຍ**

**ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ**

ຕູ້ ປນ. 4107 . ນະຄອນຫຼວງວຽງຈັນ, ສປປ ລາວ

**ໂທ: 452453 ແຟັກ: 450066 ອີເມລ: foreign trade@laopdr.com**

**www.moic.gov.la** ແລະ **www.asean.org**

ສະໜັບສະໜູນໂດຍະ

( ໂຄງການ **USAID/LUNA** ປະຈຳ ສປປ ລາວ )


# ອາຊຽນແມ່ນບ່ອນ

## (ຮຽບຮຽງໂດຍ ບຸນສົມ ພົມມະວິຫານ)




## ທີ່ມີຄວາມເຕີບໂຕສູງ:

ອາຊຽນແມ່ນຕະຫລາດທີ່ແຈ່ມໃສ ແລະ ມີຄວາມເຕີບໃຫຍ່ໄວຊຶ່ງມີຂະໜາດໃຫຍ່ເຖິງເຄິ່ງລ້ານຄົນ-ຊຶ່ງໃຫຍ່ກວ່າຕະຫລາດສະຫະລັດ ຫຼືວ່າຕະຫລາດເອີລົບ ແລະ ແມ່ນພາກພື້ນທີ່ຈະເລີນເຕີບໂຕໄວທີ່ສຸດຂອງໂລກ. ໃນ ປີ 2008, ອາຊຽນມີຄວາມເຕີບໂຕເຖິງ 4,4 % ທຽບກັບຄວາມຈະເລີນເຕີບໂຕຂອງໂລກ ຊຶ່ງມີພຽງແຕ່ 3,2%. ນັບແຕ່ 2006 ມານີ້, ລວມຍອດຜະລິດຕະພັນໂດຍລວມຂອງອາຊຽນ ບັນລຸເຖິງ 1 ພັນຕື້ໂດລາສະຫະລັດ. ໂດຍທົ່ວໄປແລ້ວບັນດາປະເທດສະມາຊິກອາຊຽນແມ່ນສາມາດແຂ່ງຂັນກັບເສດຖະກິດໂລກໄດ້ໂດຍອີງຕາມບົດລາຍງານດ້ານຄວາມແກ່ງແຍ່ງແຂ່ງຂັນຂອງໂລກໃນປີ 2008-2009 ໂດຍເວທີເສດຖະກິດໂລກ.

## ທີ່ມີການເຊື່ອມຈອດສູ່ຕະຫຼາດໂລກ:

ອາຊຽນແມ່ນເສດຖະກິດທີ່ມີຄວາມເຊື່ອມຈອດກັນ ແລະ ມີຕ່ອງໂສ້ການຜະລິດທີ່ສູງທີ່ສຸດກັບໂລກພາຍນອກ. ມີສັນຍາການຄ້າເສລີທັງໃນລະດັບປະເທດ ແລະ ລະດັບກຸ່ມອາຊຽນໂດຍລວມ. ອາຊຽນໄດ້ສະຫຼຸບການເຈລະຈາສ້າງເຂດການຄ້າເສລີ ກັບ ອົສຕຣາລີ-ນິວຊີແລນ, ສປ ຈີນ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ ແລະ ອິນເດຍ

## ທີ່ງ່າຍດາຍໃນການດຳເນີນທຸລະກິດ:

ອາຊຽນຕອບສະໜອງສະພາບແວດລ້ອມດ້ານລະບຽບການທີ່ສ້າງສັນ ເພື່ອດຳເນີນທຸລະກິດ. ອີງຕາມບົດລາຍງານກ່ຽວກັບ " Ease of Doing Business 2008 " ໂດຍທະນາຄານໂລກ, ສິງກະໂປຍັງແມ່ນປະເທດຄອງອັນດັບໜຶ່ງທີ່ສະດວກງ່າຍດາຍໃນການດຳເນີນທຸລະກິດ. ໃນຄະນະທີ່ປະເທດສະມາຊິກອື່ນໆສ່ວນຫຼາຍແມ່ນຢູ່ໃນອັນດັບທີ່ນັບມື້ນັບສູງຂຶ້ນ.






## ທີ່ມີເສດຖະກິດທີ່ຫຼາກຫຼາຍ, ມີກາລະໂອກາດທີ່ກ້ວາງຂວາງ:

ທ່າແຮງຂອງອາຊຽນແມ່ນມາຈາກຄວາມຫຼາກຫຼາຍຂອງຕົນທີ່ໄດ້ສ້າງກາລະໂອກາດທີ່ຫຼາກຫຼາຍ ແລະ ໃນລະດັບທີ່ ແຕກຕ່າງທາງດ້ານທຸລະກິດສຳລັບນັກລົງທຶນ. 10 ປະເທດສະມາຊິກອາຊຽນນັ້ນມີການພັດທະນາໃນລະດັບທີ່ແຕກຕ່າງກັນໂດຍມີອຸດສາຫະກຳນັບແຕ່ດ້ານການກະເສດທາລະດັບທີ່ນຳໃຊ້ຕົ້ນທຶນສູງທາງດ້ານເອເລັກໂຕຣນິກ, ແຜ່ນແພ ແລະ ຍານພາຫະນະ. ພາກພື້ນອາຊຽນຍັງມີຄວາມເຕີບໂຕໄວທາງດ້ານການບໍລິຫານ ແລະ ເປັນພາກພື້ນທີ່ສາກົນຍອມຮັບດ້ານອຸດສາຫະກຳ.

## ທີ່ມີການແຂ່ງຂັນດ້ານທຸລະກິດດ້ວຍຄວາມຍຸຕິທຳ:

ອາຊຽນເນັ້ນບັນຫານະໂຍບາຍການແຂ່ງຂັນ ແລະ ກົດໝາຍທີ່ຈະຮັບປະກັນປະຊາຄົມເສດຖະກິດ ທີ່ມີການແຂ່ງຂັນດ້ານທຸລະກິດດ້ວຍຄວາມຍຸຕິທຳເມື່ອດຳເນີນທຸລະກິດໃນພາກພື້ນແຫ່ງນີ້.





## ທີ່ມີກຳລັງແຮງງານທີ່ໜັກແໜ້ນ:

ອາຊຽນແມ່ນພາກພື້ນທີ່ມີກຳລັງແຮງງານສູງເຖິງ 285 ລ້ານຄົນ ແລະ ບັນດານາຍຈ້າງກໍ່ມີການພົວພັນກັນທີ່ກົມກຽວຊຶ່ງສ່ວນຫຼາຍລ້ວນແລ້ວແມ່ນແຮງງານທີ່ໜຸ່ມແໜ້ນ, ມີການສຶກສາດີ, ຊຶ່ງເປັນປັດໄຈທີ່ປະກອບສ່ວນສູງແກ່ຄວາມສາມາດແຂ່ງຂັນ ແລະ ຄວາມເຕີບໂຕໃຫຍ່ດ້ານຜະລິດຕະພາບ. ນອກນັ້ນການເຄື່ອນຍ້າຍໄປ-ມາຂອງຜູ້ປະກອບການອາຊີບດ້ານການບໍລິຫານກໍສະດວກຊຶ່ງແມ່ນຜົນມາຈາກອາຊຽນໄດ້ປະຕິບັດການຮັບຮູ້ຊຶ່ງກັນ ແລະ ກັນດ້ານວຽກບໍລິການຫຼາຍດ້ານ.



## ທີ່ມີໂຄງລ່າງພື້ນຖານເຂັ້ມແຂງ:

ບັນດາປະເທດສະມາຊິກອາຊຽນເຊື່ອມຈອດກັນຢ່າງໃກ້ຊິດ ແລະ ກັບບັນດາປະເທດພາຍນອກພາກພື້ນທີ່ດີ. ອັນນັ້ນໄດ້ສ້າງຄວາມສະດວກແກ່ການດຳເນີນທຸລະກິດໄດ້ຢ່າງດີ. ເຂດອຸດສາຫະກຳທີ່ໄດ້ຮັບການພັດທະນາທີ່ດີ ແລະ ເຕັກໂນໂລຢີລະດັບສູງ ແລະ ສູນກາງການຂົນສົ່ງທາງອາກາດ ແລະ ທາງທະເລຊັ້ນນຳຂອງໂລກໄດ້ເຊື່ອມຕໍ່ກັບເຄືອຄ່າຍຄົມມະນາຄົມ ແລະ ການສະໜອງພະລັງງານຂອງໂລກ.

## ທີ່ມີສະພາບແວດລ້ອມທີ່ສ້າງສັນມີຊີວິດຊີວາທີ່ດີ:

ອາຊຽນແມ່ນພາກພື້ນທີ່ສະໜອງຕອບສະພາບແວດລ້ອມທີ່ສ້າງສັນ-ມີຊີວິດຊີວາດ້ວຍສິ່ງອຳນວຍຄວາມສະດວກ ແລະ ໃຫ້ຄຸນນະພາບຊີວິດດ້ວຍຄຸນນະພາບສູງເຊັ່ນວ່າ: ໂຮງຮຽນ, ໂຮງໝໍ, ລະບົບຂົນສົ່ງ ແລະ ໃຫ້ຄວາມສະບາຍໃນການພັກຜ່ອນຢ່ອນອາລົມ,